ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ໜ່ວຍພັກ ທຫລ ສາຂາພາກເໜືອ ແຂວງຊຽງຂວາງ ຕີລາຄາໝາກຜົນແຫ່ງການນຳພາ



ກອງປະຊຸມໃຫຍ່ໜ່ວຍພັກທະນາຄານແຫ່ງ ສປປ ລາວ (ທຫລ) ສາຂາພາກເໜືອ ແຂວງຊຽງຂວາງ (ສາຂາ ຊຂ) ຄັ້ງທີ I ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມ ແລະ ຍັງມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຊຶ່ງຈັດຂຶ້ນໃນວັນທີ 17 ມິຖຸນາ 2020 ທີ່ ແຂວງຊຽງຂວາງ ພາຍໃຕ້ການເປັນປະທານຂອງສະຫາຍ ວິສອນ ໄຊສົງຄາມ ເລຂາໜ່ວຍພັກ ທຫລ ສາຂາ ຊຂ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ບຸນຕົ້ນ ຈັນທະພອນ ເລຂາຄະນະພັກແຂວງ-ເຈົ້າແຂວງຊຽງຂວາງ; ພ້ອມນີ້, ກໍ່ມີກຳມະການພັກແຂວງ, ຄະນະພັກຮາກຖານ-ຄະນະໜ່ວຍພັກທີ່ຂຶ້ນກັບອົງຄະນະພັກແຂວງ, ຜູ້ແທນ-3 ອົງການຈັດຕັ້ງຈັດຕັ້ງມະຫາຊົນ ທຫລ ສາຂາ ຊຂ ເຂົ້າຮ່ວມ.

ກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າ ແລະ ຮັບຮອງເອົາຮ່າງລາຍງານການເມືອງຂອງໜ່ວຍພັກ ທຫລ ສາຂາ ຊຂ ທີ່ໄດ້ສັງເກດຕີລາຄາຜົນງານການເຄື່ອນໄຫວໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງໃນການຊີ້ນຳ-ນຳພາ ຢູ່ໃນເງື່ອນໄຂສະພາບແວດລ້ອມພາຍໃນ ແລະ ຕ່າງປະເທດມີການຜັນແປ ໂດຍສະເພາະແມ່ນໄພນ້ຳຖ້ວມ, ພະຍາດລະບາດ, ການຜັນຜວນຂອງອັດຕາແລກປ່ຽນ ແລະ ອັດ ຕາດອກເບ້ຍ. ແຕ່ພາຍໃຕ້ການຊີ້ນຳ-ນຳພາຢ່າງໃກ້ຊິດ ຂອງຄະນະບໍລິຫານງານພັກແຂວງ; ຄະນະໜ່ວຍພັກ ທຫລ ສາຂາ ຊຂ ໄດ້ມີຄວາມພະຍາຍາມປຸກລະດົມກຳລັງແຮງພາຍໃນ ເພື່ອປະຕິບັດໜ້າທີ່ ໂດຍສະເພາະສຸມໃສ່ຈັດຕັ້ງປະຕິບັດທິດທາງແຜນການຂອງໜ່ວຍພັກໃນຜ່ານມາ ສາມາດຍາດໄດ້ໝາກຜົນສຳເລັດຫຼາຍດ້ານ.

ຄະນະໜ່ວຍພັກ ໄດ້ຖືເອົາການສຶກສາອົບຮົມການເມືອງ-ແນວຄິດເປັນບັນຫາກົກ ແລະ ຕິດພັນກັບທຸກການເຄື່ອນໄຫວວຽກງານດ້ວຍຫຼາຍຮູບການທີ່ເໝາະສົມ ເຮັດໃຫ້ສະມາຊິກພັກ - ພະນັກງານ ກຳໄດ້ແນວທາງນະໂຍບາຍຂອງພັກ ແລະ ຖືເອົາລະບອບສ່ອງແສງສາຍງານ, ກຳສະພາບແຕ່ລະບັນຫາໃຫ້ຈະແຈ້ງ ເປັນເນື້ອໃນສຳຄັນໃນການດຳເນີນຊີວິດການເມືອງພາຍໃນພັກ ແລະ ອົງການ ຈັດຕັ້ງມະຫາຊົນ ເພື່ອສຳຫຼວດກວດກາ, ຕຳໜິກໍ່ສ້າງຊ່ວຍເຫຼືອກັນ. ຈາກການປະຕິບັດຄືດັ່ງກ່າວເຮັດໃຫ້ສະພາບແນວຄິດຂອງຖັນແຖວ

ສະມາຊິກພັກ-ພະນັກງານແຕ່ລະຂັ້ນມີແນວຄິດອຸ່ນອ່ຽງທຸ່ນທ່ຽງ, ມີຄວາມເປັນເອກະພາບຕໍ່ກັບແນວທາງການບໍລິຫານງານຂອງຂັ້ນເທິງ, ມີຄວາມຫ້າວຫັນ, ສຸມກຳລັງເຫື່ອແຮງ, ສະຕິປັນຍາເຂົ້າໃນການປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍເປັນຢ່າງດີ.





ຄະນະໜ່ວຍພັກ ໄດ້ນຳພາວຽກງານວິຊາສະເພາະຢ່າງຕັ້ງໜ້າ ໃນນີ້ໄດ້ເອົາໃຈໃສ່ຄຸ້ມຄອງສາຂາທະນາຄານທຸລະກິດ ຕາມພາລະບົດບາດ; ມາຮອດປະຈຸບັນ, ມີສາຂາ-ໜ່ວຍບໍລິການທະນາຄານທຸລະກິດໃນ 3 ແຂວງຄື: ແຂວງຊຽງຂວາງ, ຫົວພັນ ແລະ ແຂວງໄຊສົມບູນ ມີທັງໝົດ 10 ສາຂາ, 5 ໜ່ວຍບໍລິການ; ມີຕູ້ ATM 74 ໜ່ວຍ ແລະ ມາຮອດເດືອນເມສາ 2020 ໃນ 3 ແຂວງມີຍອດຊັບສິນຫຼາຍກ່ວາ 3.258 ຕື້ກີບ ສະເພາະແຂວງຊຽງຂວາງມີຫຼາຍກ່ວາ 2.231 ຕື້ກີບກວມ 71,54% ຂອງຍອດຊັບສິນທັງໝົດ. ພ້ອມດຽວກັນ, ກໍ່ສາມາດລະດົມແຫຼ່ງທຶນໄດ້ຫຼາຍກ່ວາ 3.070 ຕື້ກີບ, ແຂວງຊຽງຂວາງມີຫຼາຍກ່ວາ 2.064 ຕື້ກີບ ກວມ 67,23%. ຂະນະດຽວກັນນັ້ນ, ກໍ່ໄດ້ປະກອບແຫຼ່ງທຶນເຂົ້າໃນການຜະລິດ-ທຸລະກິດ ແລະ ການບໍລິການ ມີຍອດສິນເຊື່ອທັງໝົດ 1.317 ຕື້ກ່ວາກີບ, ສະເພາະສະໜອງສິນແຂວງຊຽງຂວາງມີຫຼາຍກ່ວາ 888 ຕື້ກີບ, ກວມ 67,46% ຂອງຍອດສິນເຊື່ອທັງໝົດ. ນອກນີ້, ຍັງໄດ້ຄຸ້ມຄອງສະຖາບັນການເງິນໃນ 3 ແຂວງ ມີຈຳນວນ 11 ແຫ່ງ, ມີຍອດຊັບສິນຫຼາຍກ່ວາ 78 ຕື້ກ່ວາກີບ, ຍອດເງິນຝາກ 4 ຕື້ກ່ວາກີບ, ຍອດສິນເຊື່ອ 38 ຕື້ກ່ວາກີບ; ພ້ອມນີ້, ຄະນະນ່ວຍພັກ ຍັງໄດ້ມີການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານເສດຖະກິດເງິນຕາ ແລະ ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວຽກງານອື່ນໆ ໄດ້ດີສົມຄວນ.

ກອງປະຊຸມ ຍັງພ້ອມກັນໃຊ້ສິດປະຊາທິປະໄຕເລືອກເອົາຄະນະໜ່ວຍພັກຊຸດໃໝ່ ປະກອບມີ 3 ສະຫາຍ ເພື່ອສືບຕໍ່ເປັນແກນນຳໃນການຊີ້ນຳ-ນຳພາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ໃນຄັ້ງນີ້ ໂດຍເລືອກເອົາສະຫາຍ ວິສອນ ໄຊສີງຄາມ ເປັນເລຂາໜ່ວຍພັກ, ສະຫາຍ ມະໂນສິນ ຕັນດາວົງ ເປັນຮອງເລຂາ ທັງເປັນຜູ້ກວດກາ ແລະ ສະຫາຍ ນາງ ໝອມ ດວງວິໄລ ເປັນຄະນະ.



ສະຫາຍ ເລຂາຄະນະພັກ - ເຈົ້າແຂວງໆ ຊຽງຂວາງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການຊີ້ນໍາ-ນໍາພາຂອງຄະນະໜ່ວຍພັກໃນຜ່ານມາພ້ອມທັງໃຫ້ທິດຊີ້ນໍາວ່າ: ສືບຕໍ່ເພີ່ມທະວີວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ແກ່ພະນັກງານສະ ມາຊິກພັກໃຫ້ສູງຂຶ້ນ, ເຊີດຊູຄວາມຮັບຜິດຊອບໃຫ້ສູງຂຶ້ນ, ມີສະຕິລະວັງຕົວສູງ ຕໍ່ກົນອຸບາຍຂອງອິດທິກໍາລັງປໍລະປັກ ແລະ ແກ້ໄຂປະກົດການຫຍໍ້ທໍ້ ແລະ ຊ່ອງຫວ່າງອັນບໍ່ດີຢູ່ໃນຂົງເຂດທະນາຄານໃຫ້ໝົດໄປ; ປະຕິບັດລະບຽບກົດໝາຍໃຫ້ຖືກຕ້ອງ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນ; ພັດທະນາລະບົບການຊໍາລະສະສາງໃຫ້ມີຄວາມສະດວກທັນສະໄໝ; ການປ່ອຍສິນເຊື່ອຂອງທະນາຄານທຸລະກິດຕ້ອງຖືເອົາປະສິດທິຜົນເປັນຫຼັກ ໂດຍສຸມໃສ່ການຜະລິດສິນຄ້າເພື່ອສົ່ງອອກຂອງແຂວງໃຫ້ເຂັ້ມແຂງ, ສ້າງເງື່ອນໄຂໃຫ້ປະຊາ ຊົນຢູ່ໃນຊົນນະບົດຫ່າງໄກສອກຫຼີກໄດ້ຮັບການບໍລິການດ້ານການເງິນສະດວກຂຶ້ນ; ເພີ່ມທະວີຄວາມຮັບຜິດຊອບຕໍ່ວຽກງານປັບປຸງກໍ່ ສ້າງພັກ, ເອົາໃຈໃສ່ຂະຫຍາຍພັກໃຫ້ມີຄຸນນະພາບ; ພ້ອມກັນນັ້ນກໍ່ຕ້ອງເດັດຂາດບໍ່ໃຫ້ມີສະມາຊິກກາງ, ອ່ອນ ແລະ ເສຍທາດຂາດຄູນ, ຜິດຕໍ່ກົດລະບຽບພັກ, ກົດໝາຍຂອງລັດ; ສູ້ຊົນສ້າງໜ່ວຍພັກປອດໃສ ເຂັ້ມແຂງ ໜັກແໜ້ນໃຫ້ໄດ້ຕາມຄາດໝາຍທີ່ກໍານົດໄວ້; ເອົາໃຈໃສ່ຕໍ່ວຽກງານກວດກາໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ຜູ້ກວດກາຕ້ອງມີຄວາມສັດຊື່ບໍລິສຸດ, ມີຄວາມຮູ້, ມີຄວາມສາມາດດ້ານວິຊາການ, ກໍາແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ. ກວດກາເຫັນແລ້ວກໍ່ຕ້ອງຫາວິທີແກ້ໄຂໃຫ້ທັນເວລາ. ຖ້າເກີນຄວາມສາມາດກໍ່ສະເໜີຫາຂັ້ນເທິງແກ້ໄຂທັນເວລາ, ແກ້ໄຂທາງສຽງຈົ່ມວ່າຂອງສັງຄົມຕໍ່ລະບຽບທະນາຄານໃຫ້ໝົດໄປເທື່ອລະກ້າວ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**